# ກະຕາຊາວສວນ

ສະອາດ ປອດໄພ ສົດໃໝ່ຈາກຊາວສວນ

FARMER BASKET

ສະໜັບສະໜູນໂດຍ: ເຄືອຂ່າຍຊາວກະສິກອນລາວ

# ຄວາມເປັນມາ



- ກະຕ່າຊາວສວນ: ແມ່ນທາງເລືອກດ້ານການຕະຫຼາດຜັກອິນຊີຮູບແບບໃໝ່
- ເຄືອຂ່າຍຊາວກະສິກອນລາວໄດ້ເລີ່ມທົດລອງໂຄງການການສະໜັບສະໜູນໄວໜຸ່ມໃນການສ້າງລາຍຮັບຈາກການຜະລິດກະສິກຳໃຫ້ແກ່ຊາວກະສິກອນ.
- ກຸ່ມປູກຜັກອິນຊີທົ່ງມັ່ງ ເປັນໜຶ່ງໃນສະມາຊິກເຄືອຂ່າຍຊາວກະສິກອນລາວທີ່ຕັ້ງຢູ່ພາຍໃນນະຄອນຫຼວງວຽງຈັນ ທີ່ປູກຜັກອິນຊີຂາຍຢູ່ ຕໍ່ໜ້າວຽງຈັນເຊັນເຕີ້ ທຸກວັນພຸດ ແລະ ວັນ ອາທິດ. ເຖິງແນວໃດກໍ່ຕາມກຸ່ມກໍ່ບໍ່ສາມາດຂາຍຜົນຜະລິດໄດ້ທັງໝົດ.

# ຄວາມເປັນມາ (ຕໍ່)



- ເຄືອຂ່າຍຊາວກະສິກອນລາວໄດ້ສະໜັບສະໜູນກຸ່ມປູກຜັກອິນຊີ ແລະ ເດັກອາສາສະໝັກ ພາຍໃນກຸ່ມຜ່ານທາງເລືອກດ້ານການຕະຫຼາດຜັກອິນຊີ ຮູບແບບໃໝ່ "ກະຕ່າຊາວສວນ" ທີ່ສາມາດຊ່ວຍໃຫ້ຊາວກະສິກອນ ສາມາດຂາຍຜັກ ໂດຍກົງກັບຜູ້ບໍລິໂພກ ພາຍໃນນະຄອນຫຼວງວຽງຈັນ ໂດຍຜ່ານການໂຄສະນາ
- ກະຕ່າຊາວສວນ ແມ່ນປະກອບດ້ວຍ ຜັກ 6 ສະນິດ ແລະ ໝາກໄມ້ 1 ສະໜິດ ພາຍໃນກ່ອງ ເຊິ່ງຜັກທີ່ຢູ່ໃນກ່ອງ ຈະປ່ຽນໄປແຕ່ລະອາທິດ



# ວິທີການ ໂຄສະນາ

# ໂຄສະນາຜ່ານ ເຟດບຸກ









# ໂຄສະນາຕາມຫ້ອງການຕ່າງໆ



# ໂຄສະນາ ຜ່ານໃບປິວ
# ພາສາລາວ ແລະ ອັງກິດ












ຜ່ານທາງເຟດ
ບຸກ/Face book:
Farmer basket

ໂທສັ່ງຈອງຜ່ານທາງ
ໂທລະສັບ:

030 497 7298

ຜ່ານແບບຟອມສະໝັກ
ແບບອອນລາຍ

ທາງເລືອກໃນ
ການສັ່ງຈອງກ່ອງ
ຜັກ

# ການຈັດສົ່ງກອງຜັກ



ທຸກວັນທິດ ລູກຄ້າສາມາດມາ
ຮັບຜັກໄດ້ ຕໍ່ໜ້າວຽງຈັນເຊັນເຕີ
ເລີ້ມແຕ່ 7 ໂມງເຊົ້າ-2 ໂມງແລງ



ທຸກວັນພຸດ ແມ່ນມີບໍລິການສົ່ງ
ກອງຜັກຮອດຫ້ອງການ
ໂດຍຈະຈ່າຍຄ່າຂົນສົ່ງເພີ້ມ
5000 ກີບ ຕໍ່ 1 ກອງ

# ການຕິດຕາມ-ປະເມີນຜົນ

ຜ່ານການຕິດຕາມ-ປະເມີນຜົນລູກຄ້າ ໃນໄລຍະຜ່ານມາພົບວ່າ ລູກຄ້າໃຫ້ຄຳເຫັນວ່າ ຜັກທີ່ບັນຈຸໃນກ່ອງຜ່ານມາແມ່ນ ຮຽວໄວ

ດັ່ງນັ້ນ, ທາງກຸ່ມຈຶ່ງໄດ້ຊອກຫາສາເຫດ ແລະ ວິທີແກ້ໄຂ ຫຼັງຈາກນັ້ນ, ເຄືອຂ່າຍຈຶ່ງໄດ້ ຈັດການຝຶກອົບຮົມເພີ່ມໃຫ້ຊາວກະສິກອນ









# ສິ່ງທ້າທາຍ



- ຄຸນນະພາບຂອງຜັກອິນຊີເປັນປັດໃຈສະຄັນຫຼາຍ ແຕ່ໃນທາງກົງກັນຂາມຊາວກະສິກອນຍັງບໍ່ມີປະສົບການໃນການຮັກສາຄຸນນະພາບຫຼັງການເກັບກ່ຽວແລະ ການຕົບແຕ່ງຜັກຍັງບໍ່ທັນຄຸ້ນເຄີຍ ຖ້າເຮັດບໍ່ຖືກວິທີ ຈະເຮັດໃຫ້ຜັກ ເໜົ່າເປື່ອຍໄວ (ໃນຊ່ວງລະດູຝົນ) ມີຄວາມສ່ຽງທີ່ຈະເຮັດໃຫ້ລູກຄ້າຂາດຄວາມເຊື່ອໝັ້ນ.
- ລູກຄ້າເປັນຄົນລາວ ແລະ ຕ່າງປະເທດ ດັ່ງນັ້ນ, ການສື່ສານພາສາຕ່າງປະເທດຍັງເປັນສິ່ງທ້າທາຍຫຼາຍກັບຊາວກະສິກອນ
- ການຂົນສົ່ງຍັງມີຂີດຈຳກັບ ຊາວກະສິກອນບໍ່ຄຸ້ນເຄີຍກັບຫົນທາງ ດັ່ງນັ້ນ, ການຈັດສົ່ງສິນຄ້າຕາມສະຖານທີ່ຕ່າງໆ ເປັນສິ່ງທ້າທາຍຫຼາຍຕໍ່ຊາວກະສິກອນ.

# ແຜນການໃນຕໍ່ໜ້າ

- ເພີ່ມຜັກອິນຊີ ຈາກຕ່າງແຂວງ (ຈາກເຄືອຂ່າຍພືດຜັກອິນຊີເຊັ່ນ: ແຂວງນະຄອນຫຼວງ, ແຂວງວຽງຈັນ, ແຂວງຊຽງຂວາງ, ແຂວງຫົວພັນ,ແຂວງອຸດົມໄຊ, ແຂວງຈຳປາສັກ ທີ່ຜະລິດຜັກອິນຊີ ເພື່ອຊວຍລະບາຍສິນຄ້າໃຫ້ແກ່ສະມາຊິກໃຫ້ຫຼາຍຂື້ນ. ແລະ ມີ ຄວາມຫຼາກຫຼາຍຂື້ນ ເນື່ອງຈາກວາ ແຕລະແຂວງສາມາດ ປູກຜັກໄດ້ຫຼາກຫຼາຍ ແລະ ແຕກຕາງກັນ.
- ປັບປຸງຄຸນນະພາບຜັກ ແລະ  ເພີ້ມຄວາມຫຼາກຫຼາຍຂອງສະນິດຜັກ ແລະ ວາງແຜນການຜະລິດ
- ໃຊ້ ກະຕ່າ ໄມ້ ແທນ ແກັດເຈ້ຍ ເພື່ອຮັກສາສະພາບແວດລ້ອມ

# ຊ່ວຍສະໜັບສະໜູນຊາວກະສິກອນແມ່ເດີ ຂໍຂອບໃຈ



Face book: Farmer basket

ສະໜັບສະໜູນໂດຍ: ເຄືອຂ່າຍຊາວກະສິກອນລາວ